SWISS FOUNDATION FOR TECHNICAL COOPERATION

swisscontact

## ສະວິດຄອນແທັກ

## ສປປ ລາວ

ສະວິດຄອນແທັກ ແມ່ນອົງການບໍ່ສະແຫວງຫາຜົນກຳໄລທີ່ສຸມໃສ່**ໃນການພັດທະນາເສດຖະກິດແບບຍືນຍົງໂດຍເນັ້ນໃສ່ພາກສ່ວນເອກະຊົນເປັນຫຼັກ.**

**ພາລະກິດ**ຂອງພວກເຮົາແມ່ນເພື່ອເສີມສ້າງສັກກະຍະພາບຂອງຄວາມຄິດລິເລີ່ມໃຫ້ພາກເອກະຊົນ ເພື່ອຊຸກຍູ້ການພັດທະນາແບບຍືນຍົງ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນໃນການພັດທະນາ ແລະ ເສດຖະກິດທີ່ພົ້ນເດັ່ນຂຶ້ນ.

ປັດຈຸບັນ ອົງການ ສະວິດຄອນແທັກ ດຳເນີນງານຢູ່ໃນ 41 ປະເທດ ເຊິ່ງມີຫຼາຍກວ່າ 130 ໂຄງການໃນທົ່ວໂລກ. ພວກເຮົາໄດ້ເລີ່ມຈັດຕັ້ງປະຕິບັດວຽກງານຢູ່ ສປປ ລາວ ນັບແຕ່ປີ 2013 ເປັນຕົ້ນມາ ໂດຍສຸມໃສ່ການພັດທະນາພາກ ເອກະຊົນ ໃນຂົງເຂດການພັດທະນາສີມືແຮງງານ, ເສດຖະກິດໝູນວຽນ ແລະ ການທ່ອງທ່ຽວແບບຍືນຍົງ.

## ໂຄງການຂອງພວກເຮົາໃນ ສປປ ລາວ



ຮູບ: ການຝຶກອົບຮົມ ຫລັກສູດຄູ່ຂະໜານ, ສາຂາໄຟຟ້າ ທີ່ໂຮງຮຽນເຕັກນິກວິຊາຊີບ, ແຂວງອຸດົມໄຊ

### ສົ່ງເສີມດ້ານທັກສະ

**ໂຄງການ ຝຶກອົບຮົມວິຊາຊີບ ແລະ ສະໜັບສະໜູນການມີວຽກເຮັດງານທຳ** (VTESS) ມີເປົ້າໝາຍເລັງໃສ່ການຍົກລະດັບລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ຂອງຜູ້ໄດ້ຮັບຜົນປະໂຫຍດຂອງໂຄງການ, ເຊິ່ງມີອາຍຸລະຫວ່າງ 15 ຫາ 35 ປີ, ຮຽນຈົບຊັ້ນປະຖົມ ແລະ/ຫຼື ມັດທະຍົມຕອນຕົ້ນ (ຜູ້ທີ່ຮຽນບໍ່ຈົບ ມ ຕົ້ນ) ແລະ ມີລາຍໄດ້ຕ່ຳ. ໂຄງການໃຫ້ການສະໜັບສະໜູນ ການຝຶກອົບຮົມອາຊີບ ແລະ ເຂົ້າເຖິງຕະຫຼາດແຮງງານ ຫຼື ກັບຄືນເຂົ້າລະບົບສຶກສາໃໝ່ຂອງຜູ້ໄດ້ຮັບຜົນປະໂຫຍດຫຼັກ.

ໂຄງການ VTESS ແມ່ນໂຄງການຮ່ວມມື ລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສະວິດເຊີແລນ ໂດຍຜ່ານອົງການ ເພື່ອການພັດທະນາ ແລະ ການຮ່ວມມື ປະເທດສະວິດເຊີແລນ. ຈັດຕັ້ງປະຕິບັດໂດຍ ກະຊວງສຶກສາທິການ ແລະ ກິລາ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ຮ່ວມກັບ ອົງການ ສະວິດຄອນແທັກ ແລະ ມະຫາວິທະຍາໄລ ວິທະຍາສາດປະຍຸກ ແລະ ສິລະປະກຳສາດ (HSLU) , ປະເທດສະວິດເຊີແລນ.

**ໂຄງການ ສົ່ງເສີມທັກສະດ້ານການນຳໃຊ້ເຕັກໂນໂລຊີ (DLI)** ໄດ້ຮັບທຶນຈາກອົງການ ເຂົ້າຈີໂລກ (Bread for the World) ແລະ ອົງການ ດາຣູ (Dariu) ເຊິ່ງຈັດຕັ້ງປະຕິບັດຮ່ວມກັນກັບ ກະຊວງ ສຶກສາທິການ ແລະ ກິລາ. ໂຄງການ **DLI** ມີເປົ້າໝາຍໃນການສົ່ງເສີມທັກສະດ້ານການນຳໃຊ້ເຕັກໂນໂລຊີ ແລະ ກຽມຄວາມພ້ອມໃຫ້ແກ່ໄວໜຸ່ມໃນການເຂົ້າສູ່ຕະຫຼາດແຮງງານທີ່ຕິດພັນກັບເຕັກໂນໂລຊີ ໂດຍຜ່ານກິດຈະກຳການຂຽນໂປຣແກຣມຄອມພິວເຕີຂັ້ນພື້ນຖານ, ກິດຈະກຳສົ່ງເສີມຄວາມຄິດສ້າງສັນ ແລະ ການນຳໃຊ້ເຕັກໂນໂລຊີໃນການປະກອບ ທຸລະກິດ ໃຫ້ແກ່ນັກຮຽນຊັ້ນມັດທະຍົມຕອນປາຍ ແລະ ວິທະຍາໄລ ເຕັກນິກວິຊາຊີບ.

**ສະແກນບ່ອນນີ້ເພື່ອເຂົ້າເຖິງບັນດາເວັບໄຊທ ແລະ ແຜນທີ່ ຂອງ ອົງການສະວິດຄອນແທັກ**

**ລິ້ງ: https://bit.ly/swisscontactlaos**

### ບັນດາແຂວງ ທີ່ຄອບຄຸມໂດຍ ໂຄງການຂອງ ອົງການສະວິດຄອນແທັກ




- ໂຄງການຝຶກອົບຮົມວິຊາຊີບ ແລະ ສະໜັບສະໜຸນການມີວຽກເຮັດງານທຳ (VTESS)
- ໂຄງການສ້າງມູນຄ່າແກ່ສິ່ງເສດເຫຼືອ (W2V)
- ສົ່ງເສີມທັກສະດ້ານການນຳໃຊ້ເຕັກໂນໂລຊີ
- ໂຄງການສົ່ງເສີມການຜະລິດ ແລະ ການບໍລິໂພກແບບຍືນຍົງ, ໃນ ສປປ ລາວ (SCP Lao)



ຮູບພາບ: ຜູ້ເກັບຂີ້ເຫຍື້ອຢູ່ສະໜາມຂີ້ເຫຍື້ອຫຼັກ 32

### ສົ່ງເສີມດ້ານສິ່ງແວດລ້ອມ

**ໂຄງການ ສ້າງມູນຄ່າແກ່ສິ່ງເສດເຫຼືອ (W2V)** ຈັດຕັ້ງປະຕິບັດເພື່ອສົ່ງເສີມການຮັກສາສິ່ງແວດລ້ອມໃນຫົວໜ່ວຍທຸລະກິດຂະແໜງບໍລິການ (ໂຮງແຮມ, ຮ້ານອາຫານ, ຄາເຟ ແລະ ຮ້ານຄ້າສະດວກຊື້). ໂດຍປັບປຸງການປະຕິບັດໃນການຈັດການສິ່ງເສດເຫຼືອ ແລະ ເຂົ້າເຖິງຜະລິດຕະພັນທີ່ເປັນມິດຕໍ່ສິ່ງແວດລ້ອມ, ຊ່ວຍຫຼຸດຜ່ອນຕົ້ນທຶນການດຳເນີນງານ, ເພີ່ມລາຍໄດ້ ແລະ ສ້າງວຽກທີ່ເປັນມິດຕໍ່ສິ່ງແວດລ້ອມ. ໂຄງການຍັງສ້າງຄວາມເຂັ້ມແຂງໃນການດຳເນີນທຸລະກິດສຳລັບຜູ້ເກັບຂີ້ເຫຍື້ອທີ່ບໍ່ເປັນທາງການ ເພື່ອເພີ່ມລາຍຮັບຂອງພວກເຂົາ ແລະ ສ້າງຈິດສຳນຶກໃນການຮັກສາສິ່ງແວດລ້ອມໃຫ້ກັບປະຊາຊົນໃນວົງກວ້າງ.

ໂຄງການ **W2V** ແມ່ນສ່ວນໜຶ່ງຂອງໂຄງການພັດທະນາຂອງ ອົງການສະວິດຄອນແທັກ, ເຊິ່ງໄດ້ຮັບທຶນສົມທົບໂດຍ ອົງການເພື່ອການພັດທະນາ ແລະ ການຮ່ວມມື ປະເທດສະວິດເຊີແລນ ແລະ ຜູ້ໃຫ້ທຶນອື່ນໆ. ໂຄງການ W2V ຈັດຕັ້ງປະຕິບັດໂດຍກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮ່ວມກັບ ອົງການສະວິດຄອນແທັກ.

**ໂຄງການສົ່ງເສີມການຜະລິດ ແລະ ການບໍລິໂພກແບບຍືນຍົງ, ໃນ ສປປ ລາວ (SCP Lao)**ໄດ້ຮັບທຶນໂດຍ ສະຫະພາບເອີຣົບ ແລະ ອົງການເພື່ອການພັດທະນາ ແລະ ການຮ່ວມມື ປະເທດສະວິດເຊີແລນ (SDC) ແລະ ໄດ້ຮ່ວມຈັດຕັ້ງປະຕິບັດ ຮ່ວມກັບ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ໂຄງການ **SCP** ລາວ ມີເປົ້າໝາຍເພື່ອສ້າງຄວາມເຂັ້ມແຂງດ້ານຄວາມສາມາດໃຫ້ແກ່ອົງການຈັດຕັ້ງທາງສັງຄົມ ແມ່ຍິງ ແລະ ຊາວໜຸ່ມ, ອົງການຈັດຕັ້ງມະຫາຊົນ ແລະ ອົງການປົກຄອງໃນທ້ອງຖິ່ນ ໃນຂອບເຂດວຽກໂຄງການ ກ່ຽວກັບການປຶກສາຫາລືດ້ານນະໂຍບາຍສິ່ງແວດລ້ອມ ແລະ ການຄົ້ນຄວ້າ, ການປູກຈິດສານຶກ, ການສ້າງລາຍຮັບ ແລະ ການຈັດການສິ່ງເສດເຫຼືອ.

SWISS FOUNDATION FOR TECHNICAL COOPERATION

swisscontact

## Swisscontact

Swisscontact is an independent non-profit foundation focusing on **private sector-led, sustainable economic development**.

Our **mission** is to unleash the potential of private initiative to foster sustainable development and shared prosperity in developing and emerging economies.

Swisscontact is currently operating in 41 countries with more than 130 projects globally. We have been active in Lao PDR since 2013, with a specific focus on private sector development in the areas of skills development, circular economy and sustainable tourism.

## Lao PDR

### Provinces covered by Swisscontact's projects




Vocational Training and Employment Support Services (VTESS) project

Waste to Value (W2V) project

Digital Literacy Initiative (DLI) project

Sustainable Consumption and Production in Lao PDR (SCP Lao) project

## OUR PROJECTS IN LAO PDR



*Image: Equivalency Programme in Electrical Installation at IVET college in Oudomxay*

### Skills

The goal of the **Vocational Training and Employment Support Services (VTESS) project** is to improve the income and ultimately the livelihood of the main project beneficiaries, who are people between 15 and 35 years of age, have completed primary and/ or lower secondary education (early school leavers), and are subjected to income poverty. The project aims at vocational training and labour market insertion or re-entering of schooling of its main beneficiaries.

The VTESS project is a project of the Lao PDR government and the Swiss government represented by the Swiss Agency for Development and Cooperation (SDC). The project is implemented by the Ministry of Education and Sports (MoES) and the Ministry of Labour and Social Welfare (MoSLW) on the Lao PDR side, and the consortium of Swisscontact and the Lucerne University of Applied Sciences and Arts (HSLU) on the Swiss side.

---

**The Digital Literacy Initiative (DLI)** project is funded by Bread for the World and The Dariu Foundation and is implemented together with MoES. The DLI project aims to better prepare youth for productive activities in the digital economy through basic coding and programming lessons, coding clubs and digital entrepreneurship courses for students of upper secondary schools and TVET colleges.

**Please scan here for the Swisscontact's map and websites**

**Link: https://bit.ly/swisscontactlaos**



*Image: Informal waste picker at the Km32 landfill*

### Environment

**Waste to Value (W2V) project** strengthens the environmental performance in service sector SMEs (Hotels, Restaurants, Cafes and Minimarts). By improving waste management practices and access to green products, operational costs are reduced, incomes increased, and green jobs created. The project further strengthens business operations for informal waste pickers to increase their income and raises environmental awareness among the wider population.

W2V is part of Swisscontact's Development Programme, which is co-financed by SDC and other donors. W2V is implemented by the Ministry of Natural Resources and Environment (MoNRE) and Swisscontact.

---

**The Sustainable Consumption and Production in the Lao PDR (SCP Lao) project** is funded by the European Union and SDC; and is implemented by Swisscontact together with MoNRE. SCP Lao aims to strengthen the capacities of youth and women CSOs, mass organisations, and local authorities in the areas of environmental policy dialogue and research, awareness raising campaigns, income generation, and waste management.

*We create opportunities*